ຜ-ຟຟລ ເຂົ້າຮ່ວມງານສຳມະນາພາຍໃຕ້ຫົວຂໍ້: ບໍລິສັດຈົດທະບຽນພົບປະຜູ້ລົງທຶນ OPPORTUNITY DAY ປະຈຳ 6 ເດືອນຕົ້ນປີ 2025.









ໃນວັນທີ 24 ກັນຍາ 2025 ຜ-ຟຟລ

ວັນທີ 24 ກັນຍາ 2025 ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ “ຜ-ຟຟລ” ເຂົ້າຮ່ວມງານສຳມະນາພາຍໃຕ້ຫົວຂໍ້: ບໍລິສັດຈົດທະບຽນພົບປະຜູ້ລົງທຶນ Opportunity Day ປະຈຳ 6 ເດືອນຕົ້ນປີ 2025 ທີ່ສຳນັກງານຕະຫຼາດຫຼັກຊັບລາວ ຈຸດປະສົງແມ່ນເພື່ອເປີດໂອກາດໃຫ້ບັນດາບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວໄດ້ພົບປະ ແລະ ນຳສະເໜີຂໍ້ມູນໃຫ້ແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ.

ຕາງໜ້າ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຂຶ້ນນຳສະເໜີ ຜົນການດຳເນີນທຸລະກິດໃນຊ່ວງ 6 ເດືອນຕົ້ນປີ 2025 ແລະ ແຜນທຸລະກິດໃນຕໍ່ໜ້າ ຂອງ ຜ-ຟຟລ, ໂດຍມີ ທ່ານ ສຸກສະຫວາດ ໂສສຸພົນ ຜູ້ອຳນວຍການໃຫຍ່ ແລະ ຄະນະຜູ້ບໍລິຫານເຂົ້າຮ່ວມງານສຳມະນາ. ງານສຳມະນາໃນຄັ້ງນີ້ບໍ່ພຽງແຕ່ເປັນເວທີໃຫ້ແກ່ນັກລົງທຶນ ແລະ ຜູ້ທີ່ມີຄວາມສົນໃຈໃນຮຸ້ນໄດ້ມີໂອກາດສອບຖາມກ່ຽວກັບການດຳເນີນທຸລະກິດຂອງ ຜ-ຟຟລ ຢ່າງກົງໄປກົງມາແລ້ວ, ແຕ່ຍັງເປັນການສົ່ງເສີມການປະກອບສ່ວນກິດຈະກຳການລົງທຶນໃນຮຸ້ນຂອງ ຕລຊລ ໃຫ້ມີຄວາມຄຶກຄື້ນ ແລະ ມີສີສັນຫຼາຍຂຶ້ນ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ທາງເລືອກທີ່ຍືນຍົງສຳລັບທ່ານ, ພະລັງງານທີ່ຍືນຍົງສຳລັບຊາດ